**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 25-ສິງຫາຄົມ 2009 (10-25-2009)**

---

**<u>ວີຣະຊົນຜູ້ມີຊັຍຊະນະ:</u>**

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (ມາຣະໂກ 15:1-5, 12-13, 32,37-39; 16:1,5-7)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>**

ບົດຮຽນນີ້ສະແດງໃຫ້ເຫັນຊັຍຊະນະແຫ່ງການຄືນພຣະຊົນຂອງພຣະເຢຊູຄຣິດ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ?:</u>**

ເຖິງແມ່ນວ່າການເສັຽຊັຍເບິ່ງຄືຈະຫລີກບໍ່ໄດ້, ດ້ວຍພລັງອຳນາດຂອງພຣະເຈົ້າ, ຄວາມເຊື່ອຂອງສາວົກຈະພົບກັບຊັຍຊະນະ. ເສັ້ນທາງນັກຣົບຝ່າຍຈິດວິນຍານທີ່ເຫັນໄດ້ຢ່າງແຈ່ມແຈ້ງຈາກການລົ້ມເຫລວ ແລະການຕາຍໄດ້ຊັຍຊະນະຈາກການຄືນຂຶ້ນມາໃໝ່.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**

ບົດຮຽນນີ້ ຈະຊ່ອຍໃຫ້ທ່ານມີຄວາມໝັ້ນໃຈ, ເຖິງແມ່ນວ່າຈະພົບກັບສິ່ງຊົ່ວຮ້າຍ ຫລື ວ່າຈະລົ້ມເຫລວທ່ານກໍຍັງສາມາດໄດ້ຊັຍຊະນະ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລົ້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ</u>**:

- ບົດຮຽນນີ້ສະແດງເຖິງບັ້ນສຸດທ້າຍຊຶ່ງພຣະເຢຊູຜູ້ເປັນວີຣະຊົນອາດຫານໄດ້ຮຽກເອີ້ນຜູ້ທີ່ຕິດຕາມພຣະອົງໃຫ້ເດີນທາງແຫ່ງຊັຍຊະນະຢ່າງສງ່າຜ່າເຜີຍດ້ວຍກັນກັບພຣະອົງ. ພຣະເຢຊູໄດ້ຊົງສູ້ຮົບໃນຂນະທີ່ພຣະອົງຍັງເປັນຜູ້ຊ່ອຍເຫລືອຢູ່ໃນໂລກນີ້ ແລະພຣະອົງໄດ້ຊົງຮຽກເອີ້ນໃຫ້ຜູ້ທີ່ຕິດຕາມພຣະອົງໃນສມັຍນີ້ໃຫ້ສູ້ຮົບກັບສິ່ງຊົ່ວຮ້າຍຕ່າງໆ.
- ການປະຈົນພັຍຂອງພຣະເຢຊູຄັ້ງສຸດທ້າຍອາທິດທີ່ແລ້ວເປັນການຕໍ່ສູ້ຣະຫວ່າງພຣະເຢຊູກັບສັດຕຣູຂອງພຣະອົງ. ໃຫ້ນັກຮຽນຊອກເຫດຜົນສຳລັບການຮຽກເອີ້ນວ່າພຣະເຢຊູເປັນວີຣະຊົນທີ່ອາດຫານ ແລະມີຫຍັງແດ່ທີ່ພຣະອົງໄດ້ຊົງທຳການອັສຈັນກ່ອນທີ່ພຣະອົງຈະສິ້ນພຣະຊົນ.

1. **ຢືນຢູ່ຢ່າງສູງສົ່ງ:** (ມາຣະໂກ 15:1-5)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ມາຣະໂກ 15:1-5
- ດ້ວຍເຫດໃດພຣະເຢຊູຈຶ່ງບໍ່ຍອມເອົາທາງທີ່ອອກຈາກການຕຶງທີ່ໄມ້ກາງແຂນຊຶ່ງເປັນທາງທີ່ງ່າຍທັ້ງໆທີ່ພຣະອົງສາມາດກະທຳໄດ້?
- ປີລາດເຊັ່ນດຽວກັນໄດ້ບອກແລ້ວວ່າ ພຣະເຢຊູບໍ່ໄດ້ມີຄວາມຜິດປະການໃດຄວາມນີ້ປີລາດໄດ້ເວົ້າຕັ້ງສາມເທື່ອ, ລາວໄດ້ປະຕິເສດທີ່ຈະຢືນຢູ່ຢ່າງສູງສົ່ງໃນເວລານັ້ນ.
- ປີລາດໄດ້ຕີຕົວອອກໂດຍຖອດມົງກຸດອອກແລະດ້ວຍການລ້າງມື
- ເຮັດແນວໃດພວກເຮົາຈະສາມາດຫລີກເວັ້ນຈາກພຶດຕິກັມຢ່າງນີ້?
- ຊຶ່ງໃນເວລານີ້ພວກອັຄສາວົກໄດ້ພາກັນໄດ້ທຳການຕໍ່ສູ້ກັບການຕັດສິນໃຈໃນການຕິດຕາມພຣະເຢຊູ

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** (ມາຣະໂກ 15:1-5)

1. ເປັນດ້ວຍເຫດໃດຄຣິສຕຽນຈຶ່ງມີຄວາມຫຍຸ້ງຍາກໃນການຕັດສິນໃຈໃນເມື່ອປະເຊີນໜ້າກັບການບີບບັງຄັບກ່າວຫາຈາກທາງຝ່າຍໂລກ?
2. ດ້ວຍຫລັກຖານອັນພຽງພໍໃນການທີ່ພຣະເຢຊູເປັນພຣະຜູ້ຊ່ອຍໃຫ້ລອດພົ້ນແລະເປັນອົງພຣະຜູ້ເປັນເຈົ້າຂອງພວກເຮົາ, ແລ້ວເປັນຫຍັງຈຶ່ງມີບາງຄົນຍັງຕໍ່ສູ້ຄັດຄ້ານ?
3. ດ້ວຍເຫດໃດຜູ້ທີ່ເຊື່ອຈຶ່ງກະທຳເໝືອນປີລາດ ແລະໄປຕໍ່ສູ້ກັບສິ່ງທີ່ເຂົາເຈົ້າຮູ້ວ່າສິ່ງນັ້ນເປັນການຖືກຕ້ອງທ່ຽງທັມ?

2. **ຢືນຢູ່ຄົນດຽວ:** (ມາຣະໂກ 15:12-13,32)

- ສເນີໃຫ້ນັກຮຽນຜູ້ນຶ່ງອ່ານພຣະທັມ ມາຣະໂກ 15:12-13,32
- ພຣະເຢຊູຊົງຢືນຢູ່ຜູ້ດຽວ; ບາງເທື່ອພວກເຮົາກໍຕ້ອງຢືນຢູ່ພຽງຄົນດຽວ.
- ບາງສິ່ງບາງຢ່າງທີ່ພວກເຮົາຄວນຈະເຮັດຢ່າງເອົາຈິງເອົາຈັງໃນເມື່ອພວກເຮົາຢືນຢູ່ຄົນດຽວນັ້ນແມ່ນຫຍັງ?
- ໃຫ້ນັກຮຽນຊອກຫາຄົນທີ່ປະຕິເສດພຣະເຢຊູທີ່ແຕກຕ່າງກັນໄປນາໆຫລາຍຢ່າງຢູ່ໃນພຣະທັມມາຣະໂກບົດທີ 15:12-13,32 ມີແນວໃດແດ່? (ປີລາດຂໍ້ 12) (ມົງກຸດ ຂໍ້ 13); ພວກຜູ້ນຳສາສນາ (ຂໍ້ 32); ທຸກຄົນໃນຈຳນວນນີ້ໄດ້ສະແດງເຖິງຄວາມບໍ່ຮູ້ແຜນການຂອງພຣະເຈົ້າສຳລັບມະນຸດ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** ມາຣະໂກ 15:12-13,32

1. ທ່ານເຄີຍໄດ້ຖືກກຸ່ມຄົນປະເພດນີ້ເຮັດໃຫ້ທ່ານເສັຽຄວາມຕັ້ງໃຈຂອງທ່ານບໍ່? ແລະທ່ານໄດ້ຕອບສນອງຕໍ່ເຫດການນີ້ຢ່າງໃດ?
2. ທ່ານມີຄວາມເຊື່ອວ່າພຣະເຢຊູເປັນພຣະເມສານ້ອຍຢູ່ບໍ່ ຖ້າທ່ານໄດ້ເດີນໄປທີ່ກ້ອງພຣະບາດທີ່ໄມ້ກາງແຂນມື້ນັ້ນ? ແມ່ນສິ່ງໃດທີ່ເຮັດໃຫ້ທ່ານເຊື່ອ?
3. ໃນເມື່ອເຫັນມານລຸກຂຶ້ນບໍ່ໄດ້ ແລະມັນບໍ່ໄດ້ຊັຍຊະນະໃນການຕໍ່ສູ້ກັບພຣະເຈົ້າເຊັ່ນນີ້ແລ້ວ ຄຣິສຕຽນຄວນຈະເຮັດແນວໃດ?

3 . **ຢືນຢູ່ຢ່າງມະຫັສຈັນ:** (ມາຣະໂກ 15:37-39)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມາຣະໂກ 15:37-39
- ການທີ່ພຣະເຢຊູໄດ້ຊົງຢືນຢູ່ກໍເພື່ອວ່າໃຫ້ຄົນອື່ນໄດ້ຢືນຢູ່ຢ່າງອັສຈັນ.
- ແນະນໍາໃຫ້ນັກຮຽນແບ່ງປັນບາງສິ່ງບາງຢ່າງຂອງການກະທໍາຂອງພຣະເຢຊູຈຶ່ງອັສຈັນໃຫ້ຊຶ່ງກັນແລະກັນ.
- ໃຫ້ນັກຮຽນສເນີທາງທີ່ພຣະເຢຊູປະສົງຢາກໃຫ້ພວກເຮົາຕອບສນອງຕໍ່ຜູ້ທີ່ກະທໍາການອັສຈັນ (ຜູ້ນໍາມາເຖິງຄວາມລອດພົ້ນ; ຜູ້ນໍາເຂົາເຈົ້າມາເປັນສາວົກ; ຜູ້ນໍາເຂົາເຈົ້າມາເປັນຜູ້ຮັບໃຊ້ຊຶ່ງກັນແລະກັນ, ).
- ໃນຂໍ້ 37 ໄດ້ຈົດຈໍ່ທີ່ລັກສນະທີ່ສະແດງອອກຂອງການແກ້ໄຂປັບປຸງຊຶ່ງພຣະເຢຊູສິ້ນພຣະຊົນ.
- ທ່ານຈະເລົ່າເຖິງຄວາມຍາກລໍາບາກຂອງຄົນທັງຫລາຍທີ່ຈະເຊື່ອວ່າພຣະເຢຊູຊົງເປີດທາງໃຫ້ມາຫາພຣະເຈົ້າທຸກເມື່ອທຸກຍາມແລະທຸກເວລາຕລອດໄປໄດ້ຢ່າງໃດ?

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** ມາຣະໂກ 15:37-39

1. ທ່ານມາຣະໂກໄດ້ບັນທຶກເຣື່ອງຜ້າກັ້ງໃນພຣະວິຫານໄວ້ຢ່າງໃດ?
2. ຄໍາພຍານອັນໃດທີ່ພວກຜູ້ປົກຄອງໂຣມໃຫ້ໄວ້?

4. **ຢືນຢູ່ຢ່າງຊັຍຊະນະ:** (ມາຣະໂກ 16:1,5-7)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ມາຣະໂກ 16:1,5-7
- ພຣະເຢຊູໄດ້ຖືກຊົງນໍາໄປໄວ້ໃນອຸໂມງຕອນແລງວັນສຸກ ແລະພວກຜູ້ຍິງມາຢ້ຽມອຸໂມງແຕ່ເຊົ້າມືດໃນວັນອາທິດ. ຊຶ່ງໄດ້ຊີ້ໃຫ້ເຫັນເຖິງຫລັກຖານໃນຄວາມຮັກຂອງພວກຜູ້ຍິງເຫລົ່ານັ້ນທີ່ມີຕໍ່ພຣະເຢຊູ.
- ພຣະເຢຊູຊົງເປັນຂຶ້ນມາຈາກຕາຍໄດ້ຢັ້ງຢືນຊັຍຊະນະຄວາມຕາຍຂອງພຣະອົງ.
- ໃນເມື່ອເທວະດາໄດ້ແນະນໍາໃຫ້ພວກຜູ້ຍິງໄປບອກສາວົກແລ້ວເຂົາເຈົ້າກໍບໍ່ໄດ້ລໍຊ້າ ແລະບໍ່ໄດ້ກັງວົນອີກ.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:**

1. ທ່ານຈະບອກເຣື່ອງຜູ້ທີ່ປະສົບກັບຊັຍຊະນະຕໍ່ບາບໄດ້ຢ່າງໃດ?
2. ໃນເວລາອັນຕະລາຍເຂົ້າມາ, ຄໍາວ່າຄວາມຫວັງໄດ້ໃຫ້ທ່ານໄດ້ຊັຍຊະນະຢ່າງໃດ?
3. ດ້ວຍເຫດໃດຄຣິສຕຽນຈຶ່ງມີຄວາມຮູ້ສຶກວ່າຖືກບັງຄັບໃຫ້ບອກຄົນອື່ນເຣື່ອງການສິ້ນພຣະຊົນ ແລະການຄືນພຣະຊົນຂອງພຣະເຢຊູຄຣິດ?

**ພຣະຄັມພີແຫ່ງຄວາມຈິງ**

- ເຖິງແມ່ນວ່າຈະພົບກັບຄວາມກົດດັນຢ່າງສາຫັດແລ້ວບໍ່ຍອມທໍ້ຖອຍຕໍ່ແຜນການຂອງພຣະເຈົ້າຮັບຮອງວ່າພວກເຮົາຈະເປັນຜູ້ໄດ້ຮັບຊັຍຊະນະ.
- ການດໍາເນີນຊີວິດແຫ່ງຊັຍຊະນະຄຣິສຕຽນໝາຍຄວາມວ່າບໍ່ທໍ້ຖອຍໃນການອຸທິດຕົນໃນທາງທີ່ຖືກຕ້ອງ.
- ພວກເຮົາດໍາເນີນຊີວິດຢູ່ຢ່າງຊັຍຊະນະຕາມທີ່ພວກເຮົາໄດ້ບອກຄົນອື່ນ ເຂົາເຈົ້າສາມາດເປັນຄົນທີ່ມີຊັຍຊະນະເໜືອຄວາມບາບໄດ້ເພາະພຣະເຢຊູຄຣິດໄດ້ຊົງອຸທິດຕົນ ແລະດ້ວຍການຄືນຂຶ້ນມາຈາກຕາຍ.